**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
*************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 16 /ມຕ.ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 07/08/2020

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ ຄັ້ງທີ 3 ປະຈໍາປີ 2020, ວັນທີ 07/08/2020

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 3 ປະຈໍາປີ 2020 ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 07/08/2020 ທີ່ສໍານັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີກໍາມະການສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ເຫັນດີໃຫ້ ທຄຕລ ນໍາສະເໜີໃຫ້ສະພາບໍລິຫານຮັບຮອງຜົນການກວດສອບເອກະສານລາຍງານການເງິນປະຈໍາ 6 ເດືອນ 2020 (ມາດຖານລາວ ແລະ ມາດຖານສາກົນ) ເຊິ່ງກວດສອບໂດຍບໍລິສັດ PWC ຜ່ານທາງຈົດໝາຍວຽນພາຍຫຼັງສໍາເລັດການກວດສອບ.
2. ຮັບຮອງການສ້າງຕັ້ງ ທຄຕລ ສາຂາໄຊສົມບູນ, ຮັບຮອງບົດວິພາກ ແລະ ລະບຽບການຄຸ້ມຄອງສາຂາ, ເພື່ອເປັນບ່ອນອີງນໍາສະເໜີ ທະນາຄານແຫ່ງ ສປປ ລາວ ຕາມຂັ້ນຕອນ.
3. ຮັບຮອງການເພີ່ມທຶນຈົດທະບຽນໃຫ້ທະນາຄານລາວຝລັ່ງ ຕາມສັດສ່ວນການຖືຮຸ້ນຂອງ ທຄຕລ.
4. ຮັບຮອງລາຍການສິນເຊື່ອສໍາລັບລູກຄ້າລາຍໃຫຍ່ຈໍານວນ 1 ລາຍການ.
5. ຮັບຮອງການແຕ່ງຕັ້ງບຸກຄະລາກອນ ທຄຕລ ຈໍານວນ 1 ຕໍາແໜ່ງ.

ປະທານສະພາບໍລິຫານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບຸນເຫຼືອ ສິນໄຊວໍຣະວົງ